ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

********✧********

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ຫ້ອງການຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ____ /ຫຄຊກລ.ຄສ

ນະຄອນຫລວງວຽງຈັນ, ວັນທີ: ......05 DEC 2019

# ບົດບັນທຶກກອງປະຊຸມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນ (IM TWG Meeting) ປະຈຳໄຕມາດ 04 ປີ 2019

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ:

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຂໍ້ມູນທີ່ໄດ້ໄຂຂຶ້ນໃນເວລາ 08:30 ຫາ 12:15 ໃນວັນທີ 06 ທັນວາ 2019 ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ ແລະ ມີຜູ້ເຂົ້າຮ່ວມຄື: ຫົວໜ້າໜ່ວຍງານຄຸ້ມຄອງຂໍ້ມູນ, ໜ່ວຍງານກວດກູ້ ຂອງຫ້ອງການ ຄຊກລ ແລະ ບັນດາວິຊາການໜ່ວຍງານຄຸ້ມຄອງຂໍ້ມູນຂອງຫ້ອງການ ຄຊກລ ພ້ອມດ້ວຍຫົວໜ້າໜ່ວຍງານຄຸ້ມຄອງຂໍ້ມູນຈາກ 05 ອົງການ ແລະ ຊ່ຽວຊານຕ່າງປະເທດ 03 ທ່ານ ທັງໝົດລວມ 16 ທ່ານ.

## II ຈຸດປະສົງ:

ເພື່ອສືບຕໍ່ທົບທວນຄືນບັນຫາທີ່ຍັງຄ້າງຄາ ແລະ ການແກ້ໄຂຂໍ້ສະເໜີ ຈາກກອງປະຊຸມວິຊາການຄັ້ງວັນທີ 13 ກັນຍາ 2019 ທີ່ຜ່ານມາ, ປຶກສາຫາລືບັນຫາ ແລະ ສິ່ງທ້າທ້າຍໃນການຄຸ້ມຄອງຂໍ້ມູນຈາກອົງການປະຕິບັດງານຕ່າງໆ, ພ້ອມທັງໃຫ້ແຕ່ລະອົງການມີຂໍ້ສະເໜີເພື່ອເຮັດໃຫ້ວຽກງານຄຸ້ມຄອງຂໍ້ມູນກ່ຽວກັບບັນຫາ ລບຕ ໃນ ສປປ ລາວ ໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ.

## III ເນື້ອໃນກອງປະຊຸມ:

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:30 ໂມງ ໂດຍການເປັນປະທານຂອງທ່ານ ບຸນເພັງ ສີສະຫວັດ ຮອງຫົວໜ້າຫ້ອງການ ຄຊກລ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດ, ກອງປະຊຸມໄດ້ຮັບຊາບ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

1. **ບັນຫາ ແລະ ສິ່ງທ້າທ້າຍໃນການຄຸ້ມຄອງຂໍ້ມູນຈາກອົງການປະຕິບັດງານໆ**
   - ແບບຟອມການເກັບກຳຂໍ້ມູນພາກສະໜາມແມ່ນຍັງມີຄວາມຊັບຊ້ອນກັບແບບຟອມປ້ອນຂໍ້ມູນໃນ IMSMA ຢູ່
   - ໃນແບບຟອມການກວດກູ້ພື້ນທີ່ ແມ່ນຍັງມີຄວາມສັບສົນລະຫວ່າງພື້ນທີ່ທີ່ຍົກເລີກກັບພື້ນທີ່ທີ່ກວດບໍ່ໄດ້
   - ສຳຫຼັບ CHA ທີ່ກວມເອົາເນື້ອທີ່ຂອງສອງບ້ານແມ່ນມີບັນຫາໃນເວລາຂຶ້ນແຜນກວດກູ້

- ທາງກອງທັບເກັບກູ້ລະເບີດ ແມ່ນຍັງມີບັນຫາໃນການສົ່ງບົດລາຍງານ ແລະ ການວິເຄາະຂໍ້ມູນເພາະວ່າ ພະນັກງານຍັງບໍ່ທັນຄ່ອງແຄ່ວເລື່ອງການນໍາໃຊ້ຄອມພິວເຕີ ລວມເຖິງການນໍາໃຊ້ GID, Google Earth ທີ່ກ່ຽວຂ້ອງກັບການວິເຄາະຂໍ້ມູນ

**2. ຂໍ້ສະເໜີຈາກອົງການປະຕິບັດງານຕ່າງໆ**

- ສະເໜີໃຫ້ມີການຝຶກອົບຮົມການນໍາໃຊ້ IMSMA ພ້ອມທັງມີໃບຢັ້ງຢືນຫຼັງຈາກສໍາເລັດການຝຶກອົບຮົມ
- ສະເໜີໃຫ້ມີການຝຶກອົບຮົມການນໍາໃຊ້ GIS ພ້ອມທັງມີໃບຢັ້ງຢືນຫຼັງຈາກສໍາເລັດການຝຶກອົບຮົມ
- ສະເໜີໃຫ້ມີການຝຶກອົບຮົມການດຶງຂໍ້ມູນຈາກ IMSMA ໄປຫາ GIS ໃຫ້ເປັນມາດຕະຖານດຽວກັນໃນທົ່ວຂະແໜງການ ລບຕ
- ສະເໜີໃຫ້ມີການແລກປ່ຽນບົດຮຽນກັບອົງການອື່ນໆ ເພື່ອໃຫ້ການວິເຄາະຂໍ້ມູນມີປະສິດທິພາບດີຂື້ນກວ່າເກົ່າ
- ແບບຟອມໃນການເກັບກໍາຂໍ້ມູນພາກສະໜາມກັບຟອມປ້ອນຂໍ້ມູນໃນ IMSMA ຄວນຈະສອດຄ່ອງກັນ
- ໃນແບບຟອມ PCA ຢາກໃຫ້ເພີ່ມເປີເຊັນຂອງການນໍາໃຊ້ດິນຕົວຈິງເຂົ້າໃນແບບຟອມ
- ໃນກອງປະຊຸມວິຊາການແມ່ນສະເໜີໃຫ້ມີໜ່ວຍງານກວດກູ້ ແລະ ໜ່ວຍງານຄຸ້ມຄອງຂໍ້ມູນເຂົ້າຮ່ວມນໍາກັນ
- ສະເໜີໃຫ້ໜ່ວຍງານຄຸ້ມຄອງຂໍ້ມູນຫ້ອງການ ຄຊກລ ປັບປຸງຂໍ້ມູນບ້ານໃນ IMSMA ເຊິ່ງທາງ ຄກລ ຈະສະໜອງຂໍ້ມູນໃຫ້
- ສໍາຫຼັບ CHA ທີ່ກວມເອົາເນື້ອທີ່ຂອງສອງບ້ານແມ່ນສະເໜີໃຫ້ແບ່ງບົດລາຍງານອອກເປັນສອງບົດລາຍງານຕາມແຕ່ລະບ້ານ

## IV. ສະຫຼຸບ:

ກອງປະຊຸມໄດ້ຕົກລົງບັນດາບັນຫາ ດັ່ງລຸ່ມນີ້:

- ໜ່ວຍງານຄຸ້ມຄອງຂໍ້ມູນຫ້ອງການ ຄຊກລ ຈະພິຈາລະນາກ່ຽວກັບການຈັດການຝຶກອົບຮົມກ່ຽວກັບການນໍາໃຊ້ IMSMA
- ຫ້ອງການ ຄຊກລ ຈະຊຸກຍູ້ ແລະ ສະໜັບສະໜູນເລື່ອງການປະກອບເອກະສານໃຫ້ແຕ່ລະອົງການໃນການໄປຝຶກອົບຮົມ IMSMA ຢູ່ທີ່ GICHD
- ໃນກອງປະຊຸມວິຊາການຄັ້ງຖັດໄປຫ້ອງການ ຄຊກລ ຈະໃຫ້ມີໜ່ວຍງານກວດກູ້ ແລະ ໜ່ວຍງານຄຸ້ມຄອງຂໍ້ມູນເຂົ້າຮ່ວມນໍາກັນ
- ສໍາຫຼັບຟອມເກັບກໍາຂໍ້ມູນຕ່າງໆແມ່ນທາງ ຄຊກລ ແລະ ອົງການ NPA ແມ່ນກໍາລັງເຮັດວຽກຮ່ວມກັນເພື່ອປັບປຸງແບບຟອມຕ່າງໆຢູ່

ກອງປະຊຸມໄດ້ປິດລົງໃນເວລາ 12: 15 ໂມງ ຂອງວັນທີ 06 ທັນວາ 2019.

**ປະທານກອງປະຊຸມ** **ໜ່ວຍງານຄຸ້ມຄອງຂໍ້ມູນ**

ທ. ກໍາມຽກຸນ ວົງພະຈິດ

ບຸນເພັງ ສີສະຫວັດ

Mr.Bounpheng SISAWATH